**DEPARTMENT OF DEVELOPMENTAL SERVICES**
1600 NINTH STREET, Room 320, MS 3-9
SACRAMENTO, CA 95814
TTY (916) 654-2054 (ສຳລັບຄົນພິການຫູ) (916) 654-1954

21 ທັນວາ 2018

ເຖິງ: ຫົວໜ້າຜູ້ບໍລິຫານສູນປະຈຳພາກ (REGIONAL CENTER EXECUTIVE DIRECTORS)

ເລື່ອງ: ຜູ້ອຳນວຍຄວາມສະດວກເອກະລາດ

ຜູ້ເຂົ້າຮ່ວມໂຄງການການຕັດສິນໃຈດ້ວຍຕົວເອງ (SDP) ອາດຈະເລືອກເອົາຜູ້ໃດຜູ້ໜຶ່ງເປັນຜູ້ຊ່ວຍພວກເຂົາຈັດຕັ້ງປະຕິບັດໂຄງການໄດ້. ຄົນຜູ້ນັ້ນຖືກເອີ້ນວ່າ ຜູ້ອຳນວຍຄວາມສະດວກເອກະລາດ. ຈຸດປະສົງຂອງການຕິດຕໍ່ນີ້ແມ່ນເພື່ອອະທິບາຍບົດບາດ ແລະ ເງື່ອນໄຂກຳນົດສຳລັບຜູ້ອຳນວຍຄວາມສະດວກເອກະລາດທີ່ໄດ້ຮັບຄ່າຈ້າງຢູ່ໃນ SDP.

## <u>ບົດບາດຂອງຜູ້ອຳນວຍຄວາມສະດວກເອກະລາດ</u>

ຕາມທີ່ໄດ້ກຳນົດໄວ້ຢູ່ໃນ Welfare & Institutions (W&I) Code §4685.8(c)(2) (ປະມວນກົດໝາຍສະຫວັດດີການ ແລະ ສະຖາບັນ) (ເບິ່ງເອກະສານສອດມານຳ), ຜູ້ອຳນວຍຄວາມສະດວກເອກະລາດແມ່ນຄົນຜູ້ທີ່ຖືກເລືອກ ແລະ ຖືກສັ່ງໂດຍຜູ້ເຂົ້າຮ່ວມ ແລະ ຜູ້ທີ່ສາມາດໃຫ້ການຊ່ວຍເຫຼືອໃນວິທີທາງຕໍ່ໄປນີ້ຄື:

- ຊ່ວຍເຫຼືອບຸກຄົນເຮັດການຕັດສິນໃຈນຳໃຊ້ຂໍ້ມູນກ່ຽວກັບງົບປະມານບຸກຄົນຂອງພວກເຂົາ;
- ຊອກຫາ, ເຂົ້າເຖິງ ແລະ ປະສານການບໍລິການ ແລະ ສະໜັບສະໜູນໃຫ້ຖືກຕ້ອງກັບແຜນການໂຄງການບຸກຄົນຂອງຜູ້ເຂົ້າຮ່ວມ (IPP);
- ກຳນົດຄວາມຕ້ອງການທັນທີ ແລະ ໄລຍະຍາວ ແລະ ສ້າງທາງເລືອກເພື່ອບັນລຸຄວາມຕ້ອງການເຫຼົ່ານັ້ນ;
- ນຳພາ, ເຂົ້າຮ່ວມ ແລະ/ຫຼື ສະໜັບສະໜູນໃນນາມຂອງຜູ້ເຂົ້າຮ່ວມຢູ່ໃນຂະບວນການວາງແຜນເອົາຄົນເປັນໃຈກາງ ແລະ ການສ້າງ IPP; ແລະ
- ຮັບເອົາການບໍລິການ ແລະ ການສະໜັບສະໜູນທີ່ກຳນົດ.

## <u>ເງື່ອນໄຂກຳນົດຂອງຜູ້ອຳນວຍຄວາມສະດວກເອກະລາດທີ່ໄດ້ຮັບຄ່າຈ້າງ</u>

ບຸກຄົນຜູ້ຮັບໃຊ້ເປັນຜູ້ອຳນວຍຄວາມສະດວກເອກະລາດມີຄວາມຈຳເປັນຕ້ອງໄດ້ຮັບການຝຶກອົບຮົມດ້ວຍຄ່າໃຊ້ຈ່າຍຂອງລາວ ຫຼື ຂອງນາງເອງຢູ່ໃນ:

- ຫຼັກການຂອງການຕັດສິນໃຈດ້ວຍຕົວເອງ:
- ຂະບວນການວາງແຜນເອົາຄົນເປັນໃຈກາງ; ແລະ,
- ຄວາມຮັບຜິດຊອບອື່ນອະທິບາຍໄວ້ຂ້າງເທິງພາຍໃຕ້ "ບົດບາດຂອງຜູ້ອຳນວຍຄວາມສະດວກເອກະລາດ".

ຜູ້ເຂົ້າຮ່ວມ ແລະ ຜູ້ໃຫ້ບໍລິການຄຸ້ມຄອງຈະກວດສອບວ່າ ຜູ້ທີ່ອາດຈະເປັນຜູ້ອຳນວຍຄວາມສະດວກເອກະລາດເຮັດໄດ້ຕາມເງື່ອນໄຂກຳນົດການຝຶກອົບຮົມຕາມທີ່ໄດ້ກຳນົດໄວ້ຂ້າງເທິງ.

ບຸກຄົນຕໍ່ໄປນີ້ອາດຈະບໍ່ເຮັດໜ້າທີ່ເປັນຜູ້ອຳນວຍຄວາມສະດວກເອກະລາດໄດ້ຮັບຄ່າຈ້າງ:

- ຄົນຜູ້ທີ່ໃຫ້ການບໍລິການອື່ນແກ່ຜູ້ເຂົ້າຮ່ວມຕາມ IPP ຂອງລາວ ຫຼື ຂອງນາງ;
- ຄົນຜູ້ທີ່ບຸກຄົນ/ໜ່ວຍງານຈ້າງເຮັດວຽກໃຫ້ການບໍລິການແກ່ຜູ້ເຂົ້າຮ່ວມ;
- ພໍ່ແມ່ຂອງຜູ້ເຂົ້າຮ່ວມທີ່ເປັນຜູ້ເຍົາ; ຫຼື
- ຜົວ/ເມຍຂອງຜູ້ເຂົ້າຮ່ວມ.

<u>**ການເລືອກຜູ້ອຳນວຍຄວາມສະດວກເອກະລາດ**</u>

ຖ້າຜູ້ເຂົ້າຮ່ວມ SDP ເລືອກທີ່ຈະຈ້າງຜູ້ອຳນວຍຄວາມສະດວກເອກະລາດໜຶ່ງ ຫຼື ຫຼາຍຄົນ, ຄ່າໃຊ້ຈ່າຍສຳລັບການບໍລິການເຫຼົ່ານັ້ນໄດ້ຖືກຕໍ່ລອງລະຫວ່າງຜູ້ອຳນວຍຄວາມສະດວກເອກະລາດ ແລະ ຜູ້ເຂົ້າຮ່ວມ ແລະ ຖືກຈ່າຍຈາກງົບປະມານບຸກຄົນຂອງຜູ້ເຂົ້າຮ່ວມ. ຜູ້ເຂົ້າຮ່ວມຕັດສິນໃຈວ່າ ພວກເຂົາຕ້ອງການການບໍລິການອັນໃດຈາກຜູ້ອຳນວຍຄວາມສະດວກ ແລະ ອາດຈະເລືອກທີ່ຈະໃຫ້ມີຜູ້ອຳນວຍຄວາມສະດວກຫຼາຍກ່ວາໜຶ່ງຄົນ ທີ່ເຮັດບົດບາດຕ່າງກັນ. ງົບປະມານຂອງບຸກຄົນຈະບໍ່ເພີ່ມຂຶ້ນເພື່ອເອົາໄປຈ່າຍຄ່າໃຊ້ຈ່າຍຂອງຜູ້ອຳນວຍຄວາມສະດວກເອກະລາດ.

ຖ້າຜູ້ເຂົ້າຮ່ວມເລືອກທີ່ຈະບໍ່ຈ້າງຜູ້ອຳນວຍຄວາມສະດວກເອກະລາດ, ຜູ້ເຂົ້າຮ່ວມອາດຈະໃຊ້ຜູ້ປະສານງານການບໍລິການຂອງສູນປະຈຳພາກຂອງລາວ ຫຼື ນາງ ເພື່ອໃຫ້ການບໍລິການທີ່ໄດ້ກຳນົດໄວ້ຢູ່ພາຍໃຕ້ "ບົດບາດຂອງຜູ້ອຳນວຍຄວາມສະດວກເອກະລາດ".

ຜູ້ເຂົ້າຮ່ວມຄວນຈະເລືອກຜູ້ອຳນວຍຄວາມສະດວກເອກະລາດກັບຜູ້ທີ່ພວກເຂົາຮູ້ສຶກສະດວກສະບາຍ ແລະ ຜູ້ທີ່ເຂົ້າໃຈຄວາມຕ້ອງການຂອງພວກເຂົາ ແລະ ຮູ້ຈັກຊຸມຊົນຂອງພວກເຂົາ. ເຖິງແມ່ນວ່າບໍ່ຈຳເປັນຕ້ອງມີການຢັ້ງຢືນຜູ້ອຳນວຍຄວາມສະດວກເອກະລາດກໍ່ຕາມ, ຜູ້ໃຫ້ການບໍລິການຝຶກອົບຮົມບາງຄົນອາດຈະອອກໃບຢັ້ງຢືນ ຫຼື ເອກະສານຄ້າຍຄືບາງອັນໃຫ້ແກ່ຜູ້ທີ່ສຳເລັດການຝຶກອົບຮົມ. ອັນນີ້ອາດຈະຊ່ວຍຜູ້ເຂົ້າຮ່ວມໃນການກວດສອບລະດັບຂອງການຝຶກອົບຮົມທີ່ຜູ້ອຳນວຍຄວາມສະດວກໄດ້ຮັບ. ຕົວຢ່າງຄຳຖາມສຳພາດທີ່ໃຫ້ໃນລະຫວ່າງການແນະນຳ SDP ທີ່ຜູ້ເຂົ້າຮ່ວມອາດຈະນຳໃຊ້ ເພື່ອຊ່ວຍໃນການເລືອກຜູ້ອຳນວຍຄວາມສະດວກເອກະລາດ.

ຖ້າມີຄຳຖາມກ່ຽວກັບຂໍ້ມູນນີ້, ກະລຸນາຕິດຕໍ່ຫາ sdp@dds.ca.gov.

ດ້ວຍຄວາມຮັກແພງ,

*ລົງລາຍເຊັນເບື້ອງຕົ້ນໂດຍ:*

JIM KNIGHT (ຈິມ ໄນ້)
ຜູ້ຊ່ວຍຮອງຫົວໜ້າພະແນກບໍລິການຊຸມຊົນ

ເອກະສານສອດມານຳ

ສຳເນົາສົ່ງ: ຜູ້ບໍລິຫານປະຈຳພາກ (Regional Center Administrators), ທີ່ປຶກສາຫົວໜ້າສູນປະຈຳພາກ (Regional Center Chief Counselors)
ຫົວໜ້າຝ່າຍບໍລິການຊຸມຊົນສູນປະຈຳພາກ (Regional Center Community Services Directors), ສະມາຄົມໜ່ວຍງານສູນປະຈຳພາກ (Association of Regional Center Agencies)
ສະພາຂອງລັດວ່າດ້ວຍຄວາມພິການດ້ານພັດທະນາການ (State Council on Developmental Disabilities)

**ເອກະສານສອດມານຳ**

**ຜູ້ອຳນວຍຄວາມສະດວກເອກະລາດຈາກປະມວນກົດໝາຍສະຫວັດດີການ ແລະ ສະຖາບັນ (Welfare & Institutions (W&I) Code)**

§4685.8(c)(2) "ຜູ້ອຳນວຍຄວາມສະດວກເອກະລາດ" ໝາຍເຖິງບຸກຄົນທີ່ຜູ້ເຂົ້າຮ່ວມເລືອກ ແລະ ສັ່ງ ເຊິ່ງເປັນຜູ້ທີ່ບໍ່ໄດ້ໃຫ້ການບໍລິການແກ່ຜູ້ເຂົ້າຮ່ວມອີງຕາມ IPP ຂອງລາວ ແລະ ນາງ ແລະ ບໍ່ຖືກຈ້າງເຮັດວຽກໂດຍບຸກຄົນທີ່ໃຫ້ການບໍລິການແກ່ຜູ້ເຂົ້າຮ່ວມ. ຜູ້ອຳນວຍຄວາມສະດວກເອກະລາດອາດຈະຊ່ວຍຜູ້ເຂົ້າຮ່ວມເຮັດການຕັດສິນໃຈໃຊ້ຂໍ້ມູນກ່ຽວກັບງົບປະມານບຸກຄົນ ແລະ ໃນການຊອກຫາ, ການເຂົ້າເຖິງ ແລະ ການປະສານງານການບໍລິການ ແລະ ການສະໜັບສະໜູນທີ່ເປັນໄປຕາມ IPP ຂອງຜູ້ເຂົ້າຮ່ວມ. ລາວ ຫຼື ນາງພ້ອມຊ່ວຍເຫຼືອໃນການກຳນົດຄວາມຕ້ອງການທັນທີ ແລະ ໄລຍະຍາວ, ການສ້າງທາງເລືອກ ເພື່ອໃຫ້ໄດ້ຕາມຄວາມຕ້ອງການເຫຼົ່ານັ້ນ, ການນຳພາ, ການເຂົ້າຮ່ວມ ແລະ/ຫຼື ການສະໜັບສະໜູນໃນນາມຂອງຜູ້ເຂົ້າຮ່ວມຢູ່ໃນຂະບວນການວາງແຜນເອົາຄົນເປັນໃຈກາງ ແລະ ການສ້າງ IPP; ແລະ ຮັບເອົາການບໍລິການ ແລະ ການສະໜັບສະໜູນທີ່ກຳນົດ.
ຖ້າມີຄ່າໃຊ້ຈ່າຍຂອງຜູ້ອຳນວຍຄວາມສະດວກເອກະລາດແມ່ນຜູ້ເຂົ້າຮ່ວມຈະໄດ້ຈ່າຍຈາກງົບປະມານບຸກຄົນຂອງລາວ ຫຼື ຂອງນາງ. ຜູ້ອຳນວຍຄວາມສະດວກເອກະລາດຈະໄດ້ຮັບການຝຶກອົບຮົມໃນດ້ານຫຼັກການຂອງການຕັດສິນໃຈດ້ວຍຕົວເອງ, ຂະບວນການວາງແຜນເອົາຄົນເປັນໃຈກາງ ແລະ ຄວາມຮັບຜິດຊອບອື່ນໆທີ່ອະທິບາຍໄວ້ຢູ່ໃນວັກນີ້ດ້ວຍຄ່າໃຊ້ຈ່າຍຂອງລາວ ຫຼື ຂອງນາງເອງ.

§4685.8(d)(3)(F) ຜູ້ເຂົ້າຮ່ວມອາດຈະໃຊ້ການບໍລິການຂອງຜູ້ອຳນວຍຄວາມສະດວກເອກະລາດຕາມທາງເລືອກຂອງລາວ ຫຼື ຂອງນາງເອງ ເພື່ອຈຸດປະສົງຂອງການໃຫ້ການບໍລິການ ແລະ ການເຮັດໜ້າທີ່ຕາມທີ່ໄດ້ອະທິບາຍໄວ້ຢູ່ໃນວັກທີ (2) ຂອງຂໍ້ຍ່ອຍ (c). ຖ້າຜູ້ເຂົ້າຮ່ວມເລືອກທີ່ຈະບໍ່ໃຊ້ຜູ້ອຳນວຍຄວາມສະດວກເອກະລາດ, ລາວ ຫຼື ນາງອາດຈະໃຊ້ຜູ້ປະສານງານການບໍລິການຂອງສູນປະຈຳພາກຂອງລາວ ຫຼື ນາງ ເພື່ອໃຫ້ການບໍລິການ ແລະ ການເຮັດໜ້າທີ່ຕາມທີ່ໄດ້ອະທິບາຍໄວ້ຢູ່ໃນວັກທີ (2) ຂອງຂໍ້ຍ່ອຍ (c).